ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຫ້ອງວ່າການແຂວງ ເລກທີ 455 /ຫວຂ

ຄຳມ່ວນ, ວັນທີ 26 ສິງຫາ 2022

# ແຈ້ງການ

ຮຽນ: ທ່ານ ຫົວໜ້າພະແນກແຜນການ ແລະ ການລົງທຶນແຂວງ.

ເລື່ອງ: ແຈ້ງຜົນຂອງກອງປະຊຸມຄະນະປະຈຳພັກແຂວງ

- ອີງຕາມ ຂໍ້ຕົກລົງຂອງເຈົ້າແຂວງໆຄຳມ່ວນ ສະບັບເລກທີ 942/ຈຂ.ຄມ, ລົງວັນທີ 16 ພຶດສະພາ 2018 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຫ້ອງວ່າການແຂວງ.
- ອີງຕາມ ບົດບັນທຶກກອງປະຊຸມຄະນະປະຈຳພັກແຂວງ, ໃນຄັ້ງວັນທີ 08 ກໍລະກົດ 2022.

ຫ້ອງວ່າການແຂວງຄຳມ່ວນ ຂໍຖືເປັນກຽດຢ່າງສູງ ແຈ້ງຜົນກອງປະຊຸມຄະນະປະຈຳພັກແຂວງມາຍັງທ່ານຫົວໜ້າພະແນກແຜນການ ແລະ ການລົງທຶນແຂວງ ເພື່ອຮັບຊາບວ່າ: *“ກ່ຽວກັບເຂດເສດຖະກິດພິເສດຂອງແຂວງ ໃຫ້ກວດກາຄືນບັນດາບໍລິສັດ ທີ່ໄດ້ມີສັນຍາສຳປະທານ ແຕ່ບໍ່ໄດ້ຈັດຕັ້ງປະຕິບັດ ແມ່ນໃຫ້ຄົ້ນຄວ້າສະເໜີຂັ້ນເທິງຍົກເລີກ; ບັນດາບໍລິສັດທີ່ໄດ້ມີການບຸກເບີກເນື້ອທີ່ແລ້ວ ແຕ່ບໍ່ໄດ້ສືບຕໍ່ຈັດຕັ້ງປະຕິບັດ ກໍ່ໃຫ້ຄົ້ນຄວ້າຕາມລະບຽບກົດໝາຍສະເໜີຍົກເລີກ; ສຳລັບບໍລິສັດທີ່ໄດ້ດຳເນີນກິດຈະການຕາມສັນຍາສຳປະທານ ແມ່ນໃຫ້ສືບຕໍ່ຊຸກຍູ້ ຈັດຕັ້ງປະຕິບັດຕາມສັນຍາສຳປະທານ ໃຫ້ຄະນະຮັບຜິດຊອບເຂດເພີ່ມທະວີຊຸກຍູ້, ຕິດຕາມ, ກວດກາ ຢ່າງເປັນປົກກະຕິ ”.*

- *ມອບໃຫ້ເຂດເສດຖະກິດພິເສດ ສົມທົບ ກັບ ພະແນກແຜນການ ແລະ ການລົງທຶນແຂວງ ກະກຽມບົດລາຍງານ ເພື່ອລາຍງານຕໍ່ລັດຖະບານ.*
- *ສ່ວນໂຄງການລົງທຶນໃນທົ່ວແຂວງ ໂຄງການໃດບໍ່ໄປບໍ່ມາ ມອບໃຫ້ ພະແນກແຜນການ ແລະ ການລົງທຶນແຂວງຄົ້ນຄວ້າສະເໜີແຈ້ງຍົກເລີກ.*
- *ສຳລັບໂຄງການພັດທະນາໜອງບົວ ໃຫ້ເຈລະຈາກັບບໍລິສັດຄືນ ຜ່ານມາໄດ້ລົງທຶນເທົ່າໃດ, ຖ້າບໍລິສັດບໍ່ສືບຕໍ່ຈັດຕັ້ງປະຕິບັດແມ່ນໃຫ້ເຈລະຈາເອົາຄືນມາເປັນຂອງລັດ.*
- *ສຳລັບໂຄງການຂອງບໍລິສັດ SV Group ສຳປະທານໃນນາມທຸລະກິດໜຸ່ມ ແມ່ນໃຫ້ປຶກສາຫາລືກັບບໍລິສັດເອົາຄືນມາເປັນຂອງລັດ.*

ດັ່ງນັ້ນ, ຫ້ອງວ່າການແຂວງຄຳມ່ວນ ຈຶ່ງແຈ້ງມາຍັງທ່ານ ເພື່ອຮັບຊາບ ແລະ ຈັດຕັ້ງປະຕິບັດຕາມເນື້ອໃນແຈ້ງການສະບັບນີ້ດ້ວຍ.

**ຫົວໜ້າຫ້ອງວ່າການແຂວງ**

ແຂວງຄຳມ່ວນ ຫ້ອງວ່າການ

ພັນຍິນ ຄົມສະໝອນ

*+ບ່ອນສົ່ງ:*

| | |
|---|---|
| - ຄະນະປະຈຳພັກແຂວງ | ທ່ານລະ 01 ສະບັບ |
| - ພະແນກແຜນການ ແລະ ການລົງທຶນແຂວງ | ທ່ານລະ 01 ສະບັບ |
| - ຄະນະ ຫວຂ | ທ່ານລະ 01 ສະບັບ ເພື່ອຕິດຕາມ |
| - ເກັບມ້ຽນ | 01 ສະບັບ |